**ບົດຮຽນໂຮງຮຽນວັນອາທິດ**
**ວັນອາທິດ ທີ 8 ເມສາ 2007 (4-8-2007)**

---

# ອົງພຣະເຢຊູມີພຣະຊົນເພື່ອເຮົາ?

**ຂໍ້ພຣະຄັມພີໃນບົດຮຽນ:** ໂຢຮັນ 20:1-18.
**ຄຳຖາມແຫ່ງຊີວິດ:** ເວລານີ້ອົງພຣະເຢຊູໄດ້ເຮັດຫຍັງເພື່ອເຮົາ?
**ພຣະຄັມພີແຫ່ງຄວາມຈິງ:** ເພາະວ່າອົງພຣະເຢຊູໄດ້ຄືນຈາກຄວາມຕາຍ, ຜູ້ທີ່ເຊື່ອຄວນບອກຜູ້ອື່ນວ່າອົງພຣະເຢຊູໄດ້ມີຊີວິດເພື່ອເຂົາ ແລະພຣະອົງໄດ້ສະເດັດຂຶ້ນໄປຫາພຣະບິດາທີ່ເມືອງຟ້າສວັນ.
**ຜົນສະທ້ອນຕໍ່ຊີວິດ:** ບົດຮຽນນີ້ໄດ້ຂຽນຂຶ້ນມາເພື່ອຊ່ວຍທ່ານໃຫ້ຄົ້ນພົບວ່າອົງພຣະເຢຊູໄດ້ເຮັດອັນໃດເພື່ອພວກເຮົາໂດຍ:

- ບອກວ່າອົງພຣະເຢຊູໄດ້ມີພຣະຊົນເພື່ອເຮົາ ແລະ,
- ສັນຍາວ່າຈະບອກຄົນອື່ນວ່າ ພຣະເຢຊູໄດ້ມີພຣະຊົນເພື່ອເຮົາ

ຫວ່າງບໍ່ນານມານີ້ ຂ້າພະເຈົ້າໄດ້ຂັບຣົດໄປບ່ອນມີອຸປະຕິເຫດ. ມີຣົດສອງຄັນໄດ້ຕຳກັນ ແລະຣົດທັງສອງໄດ້ປິ້ນໄປແລະຈອດຢູ່ໃນບ່ອນທີ່ຂ້າພະເຈົ້າບໍ່ເຂົ້າໃຈ. ຂ້າພະເຈົ້າກາຍໄປແລະພະຍາຍາມຈະສັງເກດເບິ່ງວ່າແມ່ນໃຜເປັນຄົນຜິດ. ຂ້າພະເຈົ້າໄດ້ບັກຕາເບິ່ງຕຳຣວດຈະຣາຈອນຍ່າງໄປຖາມຄົນຂັບຣົດທັງສອງ ແລະວັດແທກຮອຍຣົດເທິງຖນົນ. ມື້ຕໍ່ມາ ຂ້າພະເຈົ້າໄດ້ອ່ານລາຍງານຜົນຈາກໜັງສືພິມ ແລະຂ້າພະເຈົ້າກໍບໍ່ພໍໃຈກັບການລາຍງານເລີຍ. ສິ່ງທີ່ຂ້າພະເຈົ້າແນ່ໃຈກໍຄືວ່າ ມັນມີອຸປະຕິເຫດ ຣົດຕຳກັນເທົ່ານັ້ນ. ຂ້າພະເຈົ້າຕ້ອງສືບຂ່າວຕໍ່ເພື່ອການຊອກຫາຄວາມຈິງໃນເຣື່ອງນີ້.

ມີຫລາຍຄົນເຫັນດີວ່າມີບາງຢ່າງເກີດຂຶ້ນໃນວັນຄືນພຣະຊົນ. ມີຜູ້ຍິງບາງຄົນ ແລະຜູ້ຊາຍສອງຄົນໄດ້ເອົາພຣະສົບຂອງພຣະເຢຊູວາງໄວ້ໃນອຸບໂມງໃນວັນສຸກ, ແລະໃນວັນທິດບໍ່ມີຜູ້ໃດຢູ່ໃນອຸບໂມງ. ຜູ້ທີ່ບໍ່ເຊື່ອສາສນາໃດກໍຍັງໄດ້ຍອມຮັບວ່າມີອັນໃດອັນນຶ່ງເກີດຂຶ້ນໃນວັນຄືນພຣະຊົນຄັ້ງທຳອິດ. ຖ້າມີການສືບສວນອີກນ້ອຍນຶ່ງກໍຈະຮູ້ໄດ້ວ່າພຣະເຢຊູໄດ້ຄືນມາຈາກຕາຍເໝືອນທີ່ພຣະອົງໄດ້ເວົ້າໄວ້ແລ້ວນັ້ນ. ມີອັນໃດອີກບໍ່ທີ່ທ່ານໄດ້ຍິນຄົນອື່ນອະທິບາຍເຣື່ອງຄືນພຣະຊົນຂອງອົງພຣະເຢຊູ?

## ສຶກສາພຣະຄັມພີ

### 1. ຊອກຫາ-ແຕ່ບໍ່ພົບເຫັນ (ໂຢຮັນ 20:1-2)

ໃນວັນອາທິດ **ມາຣິອາ ໄທມັກດາລາ**ໄດ້ໄປເຖິງອຸບໂມງເພື່ອຈະຊອກຫາສົບຂອງພຣະເຢຊູ. ໃນເມື່ອລາວມາເຖິງ ລາວສັງເກດເຫັນວ່າ **ກ້ອນຫີນໄດ້ຖືກຍ້າຍອອກໄປຈາກປາກຖ້ຳແລ້ວ**. ຕາມປົກກະຕິສະມາຊິກໃນຄອບຄົວໄດ້ມີຂຸມຝັງສົບຢູ່ໃນຖ້ຳທີ່ເນີນພູ. ພວກສາວົກຂອງພຣະເຢຊູໄດ້ເອົາພຣະສົບຂອງພຣະເຢຊູໄວ້ໃນຖ້ຳຂອງທ່ານໂຢເຊັບ ໄທອາຣິມາທາ ຜູ້ເປັນຄົນຮັ່ງມີ. ບ່ອນຝັງສົບນີ້ມີກ້ອນຫີນໃຫຍ່ຕັນໄວ້ທີ່ປາກຖ້ຳຊຶ່ງເປັນທາງເຂົ້າ. ບໍ່ພຽງແຕ່ກ້ອນຫີນໄດ້ຍ້າຍອອກຈາກປາກຖ້ຳ ແຕ່ເຫັນວ່າພຣະສົບຂອງພຣະເຢຊູກໍຫາຍໄປຄືກັນ. ມາຣິອາ ຈຶ່ງແລ່ນໄປບອກ **ເປໂຕ** ແລະ

ໂຢຮັນ ພ້ອມທັງສາວົກຄົນອື່ນ, ເພື່ອຈະບອກພວກເຂົາວ່າພຣະສົບຂອງພຣະເຢຊູບໍ່ໄດ້ຢູ່ທີ່ນັ້ນແລ້ວ, ແລະມາຣີອາຄິດວ່າພວກເຈົ້ານາຍໄດ້ລັກເອົາພຣະສົບນັ້ນໄປທາງອື່ນ.

ການທີ່ເຂົ້າໃຈວ່າພວກເຈົ້ານາຍໄດ້ລັກເອົາພຣະສົບຂອງພຣະເຢຊູນັ້ນ ອາດຈະເປັນການອະທິບາຍອັນນຶ່ງທີ່ຄົນທັງຫລາຍເວົ້າວ່າສົບຂອງພຣະເຢຊູບໍ່ໄດ້ຢູ່ໃນຖໍ້າ ຫລືຂຸມຝັງສົບ. ພວກເຈົ້ານາຍໄດ້ຍົກຍ້າຍພຣະສົບໄປບໍ່? ເພື່ອພວກສາວົກຈະເຊື່ອວ່າພຣະເຢຊູໄດ້ຄືນພຣະຊົນຊຶ່ງບໍ່ເປັນຄວາມຈິງ? ມີທິສດີຫລາຍໆຢ່າງທີ່ບໍ່ເຫັນດີກັບຄວາມນຶກຄິດຢ່າງນີ້. ຕົວຢ່າງ: ນຶ່ງ, ສົມມຸດວ່າພວກເຈົ້ານາຍໄດ້ລັກເຂົາພຣະສົບໄປ ເປັນຫຍັງພວກເຂົາຈຶ່ງບໍ່ຊອກເອົາສົບຄົນອື່ນມາແທນໃນເມື່ອພວກເຂົາຢາກກໍາຈັດໃຫ້ຄຣິສຕຽນຫມົດໄປ? ພວກເຂົາບໍ່ໄດ້ເຮັດດັ່ງນັ້ນກໍເພາະວ່າອົງພຣະເຢຊູໄດ້ຄືນພຣະຊົນມາຈາກຕາຍແລ້ວ.

ມີນັກວິຈານບາງພວກໄດ້ແນະນໍາວ່າ ພວກສາວົກຂອງພຣະເຢຊູເອງໄດ້ລັກເອົາພຣະສົບຂອງພຣະເຢຊູໄປແລະກ່າວວ່າພຣະເຢຊູໄດ້ຄືນມາຈາກຕາຍ. ແຕ່ຢ່າງໃດກໍຕາມ ນາງມາຣີອາໄດ້ກ່າວວ່າຕົນເອງບໍ່ຮູ້ວ່າພຣະສົບຂອງພຣະເຢຊູຢູ່ທີ່ໃດກັນແທ້. ສ່ວນເປໂຕ ກັບໂຢຮັນກໍບໍ່ຮູ້ເລີຍວ່າພຣະສົບຂອງພຣະເຢຊູວາງໄວ້ທີ່ໃດ, ພວກເຂົາທັງສອງໄດ້ພາກັນແລ່ນຊີງກັນໄປຍັງອຸບໂມງ. ບໍ່ມີໃຜຈັກຄົນທີ່ເປັນສາວົກຂອງພຣະເຢຊູໄດ້ຮູ້ວ່າສົບຂອງພຣະອົງນັ້ນເຂົາໄດ້ວາງໄວ້ໃສ, ພວກເຂົາຈຶ່ງພາກັນຊອກຫາໃນເມື່ອພຣະສົບໄດ້ຫາຍໄປ.

ການທີ່ມີອຸມໂມງຫວ່າງເປົ່ານີ້ບໍ່ໄດ້ເຮັດໃຫ້ພວກທີ່ສົງສັຍຍອມຮັບວ່າອົງພຣະເຢຊູໄດ້ຄືນພຣະຊົນມາຈາກຕາຍແລ້ວ, ແຕ່ມັນໄດ້ມີຄໍາຖາມອັນສໍາຄັນຂຶ້ນມາວ່າ ຖ້າພວກເຈົ້ານາຍບໍ່ໄດ້ລັກເອົາພຣະສົບໄປແລ້ວພຣະສົບນັ້ນໄປໃສ? ຖ້າວ່າພວກສາວົກບໍ່ໄດ້ເອົາພຣະສົບໄປ ພຣະສົບນັ້ນໄປໃສກັນແທ້? ນອກຈາກຄໍາອະທິບາຍວ່າອົງພຣະເຢຊູໄດ້ຄືນພຣະຊົນແລ້ວ ຄໍາອະທິບາຍຢ່າງອື່ນນັ້ນເຫັນວ່າເປັນພຽງເຣື່ອງວິຈານ ບໍ່ມີພຣະສົບໃນອຸມໂມງເທົ່ານັ້ນແຫລະ?

## ၂. <u>ການເຊື່ອຟັງ-ແຕ່ຍັງບໍ່ມີການເຂົ້າໃຈ</u> (ໂຢຮັນ 20:3-10)

**ເປໂຕ**ແລະໂຢຮັນໄດ້ຍິນຂ່າວວ່າຖໍ້າຫວ່າງເປົ່າ ພວກເຂົາກໍພາກັນແລ່ນຊີງກັນໄປເບິ່ງເພື່ອຢາກຈະຮູ້ດ້ວຍຕົນເອງ. ໂຢຮັນໄດ້ແລ່ນໄວກວ່າເປໂຕ ໄດ້ໄປຮອດກ່ອນ ແຕ່ບໍ່ໄດ້ເຂົ້າໄປໃນອູມໂມງ. ໂຢຮັນໄດ້ລໍຖ້າດ້ວຍຄວາມແປກໃຈທີ່ລາວໄດ້ເຫັນ**ຜ້າພັນຕົວ**ພຣະເຢຊູກອງຢູ່. ໃນເມື່ອທັງສອງຄົນໄດ້ເຂົ້າໄປໃນຖໍ້າແລ້ວ ພວກເຂົາໄດ້ເຫັນ**ຜ້າພັນຫົວ**ຂອງພຣະເຢຊູກອງໄວ້ເປັນລະບຽບດີ ແຍກໄວ້**ຕ່າງຫາກ**. ຕ້ອງໄດ້ມີບາງຢ່າງເກີດຂຶ້ນຢ່າງແນ່ນອນ. ສ່ວນເປໂຕກັບໂຢຮັນຮູ້ຈັກວ່ານັ້ນເປັນການອັສຈັນ ແລະໄດ້**ເຊື່ອ**ວ່າພຣະຄຣິດໄດ້ຄືນມາຈາກຕາຍແລ້ວເພາະເຂົາໄດ້ເຫັນກັບຕາ. ພວກເຂົາຍັງບໍ່ທັນ**ເຂົ້າໃຈ**ເຖິງຄວາມໝາຍການຄືນພຣະຊົນ, ແຕ່ພວກເຂົາບໍ່ໄດ້ສົງສັຍເລີຍເຖິງການຄືນພຣະຊົນນັ້ນ. ພວກເຂົາພາກັບບ້ານວັນນັ້ນດ້ວຍຄວາມປລາດແລະງົງໄປໝົດ.

ພວກສາວົກເຊື່ອໃນການຄືນມາຈາກຕາຍ, ແຕ່ພວກເຂົາຍັງບໍ່ທັນເຂົ້າໃຈເຖິງຄວາມໝາຍຕໍ່ຊີວິດຂອງພວກເຂົາ. ພວກເຂົາ**ກັບບ້ານ**ບໍ່ແນ່ໃຈວ່າແມ່ນຫຍັງໄດ້ເກີດຂຶ້ນ ມີຄວາມໝາຍຢ່າງໃດ. ທຸກມື້ນີ້ມີຫລາຍຄົນໄດ້ເຊື່ອໃນສມອງວ່າມີການຄືນພຣະຊົນ ແຕ່ເປັນພຽງປະວັດສາດ, ພວກເຂົາຂາດຄວາມເຂົ້າໃຈເຖິງຄວາມສໍາຄັນກັບການຄືນພຣະຊົນ.

ພວກສາວົກຄົງຈະເຫັນຄວາມແຕກຕ່າງລະຫວ່າງເຫດການທີ່ເກີດຂຶ້ນກັບ ລາຊາໂຣ ແລະອົງພຣະເຢຊູຜູ້ຄືນມາຈາກຕາຍ. (ໂຢຮັນ 11:44). ລາຊາໂຣໄດ້ອອກມາຈາກຂຸມຝັງສົບມີຜ້າພັນຕົວຢູ່, ແຕ່ສ່ວນອົງພຣະເຢຊູ ມີຜ້າພັນຫົວກອງໄວ້ເປັນລະບຽບດີຫລັງຈາກພຣະອົງໄດ້ຄືນມາຈາກຄວາມຕາຍ. ສິ່ງນີ້ກໍບໍ່ໄດ້ປລາດສໍາລັບພຣະເຢຊູເພາະພຣະອົງຮູ້ລ່ວງໜ້າຢູ່ແລ້ວ. ການຄືນມາຈາກຄວາມຕາຍຂອງພຣະອົງນັ້ນແມ່ນແຜນການຂອງອົງພຣະບິດາມີໄວ້ສໍາລັບພຣະອົງແຕ່ນານມາແລ້ວ. ໃນເມື່ອໂຢຮັນໄດ້ເຫັນຜ້າພັນຫົວຂອງພຣະເຢຊູພັບໄວ້ເປັນລະບຽບແລ້ວ ລາວຈຶ່ງໄດ້ເຊື່ອວ່າບໍ່ມີຄົນມາລັກເອົາສົບໄປ ຫລືມີການຫລອກລວງຕາໄດ້ເກີດຂຶ້ນ. ລາວເຊື່ອວ່າອົງພຣະເຢຊູໄດ້ຄືນມາຈາກຕາຍແທ້, ແລະດຽວນີ້ລາວຕ້ອງຕັດສິນໃຈວ່ານັ້ນມີຄວາມໝາຍອັນໃດ. ມາຣີອາໄດ້ເຫັນອຸບໂມງຫວ້າງເປົ່າ-ພຣະຄໍາຕອນຕໍ່ໄປຈະໄດ້ອະທິບາຍເຖິງສິ່ງເກີດຂຶ້ນຕໍ່ໄປ.

## 3. ໄດ້ເຫັນກັບຕາ-ແຕ່ຍັງຈື່ບໍ່ໄດ້ (ໂຢຮັນ 20:11-15)

ຂ່າວເຣື່ອງຄືນມາຈາກຕາຍຂອງອົງພຣະເຢຊູໄດ້ແຜ່ອອກໄປຫລາຍ-ຄົນໄດ້ເວົ້າເຖິງເຣື່ອງອຸບໂມງຫວ້າງເປົ່າ, ຜ້າພັນຫົວ, ແລະການເຊື່ອຂອງພວກສາວົກ. ກຸ່ມເທວະດາປາກົດທີ່ອຸບໂມງ ແລະການສະແດງຕົວຂອງອົງພຣະເຢຊູໃຫ້ຄົນອື່ນເຫັນ ໄດ້ບອກວ່າເປັນຄວາມຈິງແທ້ທີ່ພຣະເຢຊູດ້ຄືນພຣະຊົນ. **ມາຣີອາ**ໄດ້ກັບຈາກອຸບໂມງ ແລະບໍ່ໜ້າເຊື່ອເລີຍວ່າພຣະສົບຂອງພຣະເຢຊູບໍ່ໄດ້ຢູ່ທີ່ນັ້ນ. ໃນເມື່ອນາງມາຣີອາໄດ້ເບິ່ງເຂົ້າໄປໃນອຸບໂມງ ລາວໄດ້ເຫັນ**ເທວະດາ**ສອງຕົນໄດ້ຢູ່ບ່ອນ ທີ່ເຂົາເອົາສົບພຣະເຢຊູວາງໄວ້. ເທວະດາໄດ້ຖາມລາວວ່າ ເປັນຫຍັງນາງຈຶ່ງ**ຮ້ອງໄຫ້**, ຖາມເພື່ອລາວຈະເຂົ້າໃຈ ຢາກໃຫ້ລາວເອົາຄວາມຈິງທຸກຢ່າງມາຮ່ວມເຂົ້າກັນ. ນາງມາຣີອາຍັງຍຶດຖືໃນໃຈວ່າມີຄົນໄດ້ລັກເອົາພຣະສົບໄປ.

ໃນເມື່ອນາງມາຣີອາຫລຽວຄືນຫລັງ, **ພຣະເຢຊູ**ໄດ້ຢືນຢູ່ຫັ້ນ, ແນວໃນກໍຕາມນາງມາຣີອາຍັງບໍ່ໄດ້ຮູ້ວ່າພຣະອົງແມ່ນໃຜ. ຄວາມບໍ່ເຊື່ອ ຫລືການຮ້ອງໄຫ້ອາດເຮັດໃຫ້ລາວບໍ່ຈື່ຈຳພຣະອົງໄດ້. ພຣະເຢຊູໄດ້ຖາມນາງມາຣີອາເໝືອນເທວະດາໄດ້ຖາມ. ນາງມາຣີອາໄດ້ຄາຢູ່ໃນຄວາມຄິດທີ່ວ່າມີຄົນມາລັກເອົາພຣະສົບຂອງພຣະເຢຊູໄປ, ແລະນາງຄິດວ່າຜູ້ຖາມລາວນັ້ນເປັນຄົນເຝົ້າສວນທຳມະດາ.

ບາງເທື່ອ ການລົບກວນທາງອື່ນ ຫລືຄວາມຮູ້ສຶກສິ້ນຫວັງເຮັດໃຫ້ຄົນເຮົາບໍ່ສາມາດເບິ່ງເຫັນພຣະເຢຊູໄດ້. ພວກເຂົາອາດມອງເບິ່ງແຕ່ບັນຫາ ແທນທີ່ຈະເບິ່ງເຫັນຜູ້ແກ້ບັນຫາໄດ້. ນາງມາຣີອາໄດ້ຮ້ອງໄຫ້ຢ່າງໝົດອາລົມ ໂດຍເຊື່ອວ່າມີຄົນມາລັກເອົາພຣະສົບຂອງພຣະອາຈານໄປ ຈຶ່ງເຫັນແຕ່ອຸບໂມງຫວ່າງເປົ່າ. ນາງບໍ່ໄດ້ພິຈາຣະນາເບິ່ງເຫດການເຣື່ອງການຄືນມາຈາກຄວາມຕາຍ. ນາງຍັງບໍ່ໄດ້ເອົາເຣື່ອງອຸບໂມງຫວ້າງເປົ່າ, ຜ້າພັນຫົວກອງໄວ້ເປັນລະບຽບ, ແລະການປາກົດຂອງເທວະດາສອງຕົນມາພິຈາຣະນາ ເພາະສິ່ງເຫລົ່ານີ້ໄດ້ເກີດຂຶ້ນຕາມພຣະປະສົງຂອງພຣະເຈົ້າ. ດັ່ງນັ້ນ, ນາງມາຣີອາຈຶ່ງບໍ່ໄດ້ຈື່ພຣະເຢຊູ.

## 4. ໄດ້ເຫັນກັບຕາ-ແລະບອກຄົນອື່ນ (ໂຢຮັນ 20:16-18)

ເຖິງແມ່ນວ່ານາງ**ມາຣີອາ**ຈື່ພຣະເຢຊູບໍ່ໄດ້, ແຕ່ພຣະອົງຍັງໄດ້ເວົ້າກັບລາວອີກ. ເວລາອົງພຣະເຢຊູໄດ້ຮ້ອງຊື່ມາຣີອາ, ນາງຫັນໄປຫາພຣະອົງ ແລະຮ້ອງພຣະເຢຊູວ່າ **ຣັບໂບນີ,** ຊຶ່ງແປວ່າ **ອາຈານ**. ຄວາມສິ້ນເນື້ອປະດາຕົວ ແລະຄວາມຜິດຫວັງໄດ້ຫາຍໄປຈາກນາງ. ການທີ່ຈື່ຈຳອົງພຣະເຢຊູເຮັດໃຫ້ນາງມາຣີອາປ່ຽນສະພາບຄວາມໂສກເສົ້າກັບກາຍເປັນຄວາມຍິນດີ. ແນ່ນອນ ນາງມາຣີອາປາຖນາກອດພຣະເຢຊູເໝືອນເພື່ອນທີ່ຮູ້ຈັກກັນກອດກັນ, ແຕ່ອົງພຣະເຢຊູບອກນາງມາຣີອາວ່າ **ຢ່າຈ່ອງຖິງ**ເຮົາໄວ້. ພຣະອົງຍັງບໍ່ທັນໄດ້**ສະເດັດຂຶ້ນໄປຫາພຣະບິດາ**ເທື່ອ. ພຣະເຢຊູບໍ່ຢາກໃຫ້ນາງຈ່ອງພຣະອົງໄວ້ເໝືອນກັບວ່າພຣະອົງຈະຫາຍຈາກໄປທັນຕາ. ພຣະອົງຍັງຈະຢູ່ກັບພວກເຂົາອີກຫລາຍວັນ, ພຣະອົງຈະຕ້ອງເທສນາ, ສັ່ງສອນພວກເຂົາເຖິງເຣື່ອງການຄືນພຣະຊົນຂອງພຣະອົງຊຶ່ງມີຄວາມໝາຍຕໍ່ຊີວິດຂອງພວກເຂົາ. ນາງມາຣີອາ ແລະພວກສາວົກຕ້ອງການຄຳສອນຢ່າງນີ້ ແລະເປັນເວລາທີ່ຈະບອກຄົນອື່ນເຣື່ອງຂ່າວປະເສີດໃຫ້ເຂົາໄດ້ຮູ້, ບໍ່ແມ່ນພຣກັນເຊື່ອງພຣະອົງໄວ້ໃຫ້ເປັນຄວາມລັບ.

**ນາງມາຣີອາ** ໄທມັກດາຣາໄດ້ເຂົ້າໃຈເຖິງການທີ່ພຣະອົງບໍ່ໃຫ້ຈ່ອງພຣະເຢຊູໄວ້ ເພາະນາງ**ໄດ້ອອກໄປບອກ ແລະປະກາດໃຫ້ສາວົກ**ຄົນອື່ນຮູ້ວ່າ ນາງເອງໄດ້**ເຫັນອົງພຣະເຢຊູ**ກັບຕາ ວ່າພຣະອົງໄດ້ຄືນມາຈາກຕາຍແລ້ວ. ແທນທີ່ຈະຈ່ອງພຣະອົງໄວ້ຄົນດຽວຊຶ່ງເປັນການເຫັນແກ່ຕົວ, ນາງອອກໄປແບ່ງປັນສິ່ງທີ່ນາງໄດ້ຮູ້ໄດ້ເຫັນ. ບໍ່ມີສິ່ງໃດກີດກັນບໍ່ໃຫ້ນາງບອກ? ນາງມາຣີອາມີເຣື່ອງດີທີ່ຕ້ອງບອກ ເໝືອນຄົນໝົດຫວັງຕ້ອງການຄວາມສົມຫວັງ.

ຖ້າຄົນໃດໄດ້ຕິດຕາມພຣະຄຣິດຜູ້ຄືນມາຈາກຄວາມຕາຍ, ລາວກໍມີໂອກາດທີ່ຈະແບ່ງປັນເຣື່ອງຂ່າວປະເສີດກັບຄົນອື່ນຜູ້ຊອກສະແຫວງຫາຄວາມຫວັງໃນຊີວິດ. ມີຫລາຍຄົນໄດ້ເຫັນຂໍ້ມູນໃນສາສນາຄຣິດ ແຕ່ການຮູ້ຈັກສິ່ງນັ້ນບໍ່ໄດ້ເຮັດໃຫ້ເຂົາໄດ້ຮັບຄວາມພົ້ນເລີຍ. ຫລາຍໆເທື່ອຄົນມັກຈະຟັງຄຳພະຍານຈາກຄົນທີ່ມີປະສົບການກັບຄືນມາຈາກຕາຍຂອງພຣະຄຣິດ. ທ່ານມີປະສົບການກັບພຣະອົງຫລືບໍ່? ເປັນຫຍັງທ່ານຈຶ່ງບໍ່ບອກເຣື່ອງນີ້ແກ່ຄົນອື່ນວັນນີ້? ມື້ນີ້

ເປັນວັນຄືນພຣະຊົນ,  ວັນອາທິດທີ່ພຣະເຢຊູໄດ້ຄືນມາ, ມີອັນໃດສຳຄັນໄປກວ່ານີ້ທີ່ຄົນບໍ່ໄດ້ເຊື່ອຢາກຈະຟັງແລະຮັບເອົາ? ສຳລັບຜູ້ທີ່ເຊື່ອແລ້ວ, ມີຫຍັງແດ່ສຳຄັນໄປກ່າວການບອກຄົນອື່ນວ່າພຣະເຢຊູໄດ້ຄືນພຣະຊົນແລ້ວ?

**ບົດຮຽນຊີວິດ**

ທຸກຄົນມີໂອກາດທີ່ຈະສືບເບິ່ງຂໍ້ມູນເຣື່ອງການຄືນມາຈາກຕາຍຂອງພຣະເຢຊູ ແລະຊອກຫາຄວາມໝາຍ:

- ຮູ້ຈັກຄວາມຈິງບໍ່ໄດ້ປ່ຽນເຮົາເລີຍ.
- ການເຂົ້າໃຈເຖິງຄວາມໝາຍຂອງການຄືນພຣະຊົນເປັນສິ່ງສຳຄັນຫລາຍ.
- ມີຄວາມຮູ້ສຶກໜັກໃຈ, ໝົດຫວັງໃນຊີວິດອາດກາຍເປັນສິ່ງບັງເຮົາໄວ້ບໍ່ໃຫ້ເຫັນອົງພຣະເຢຊູ.
- ຊອກໂອກາດຫລັງຈາກໄດ້ຮັບຄວາມພົ້ນແລ້ວ ເພື່ອແບ່ງປັນເຣື່ອງຄືນມາຈາກຕາຍກັບຄົນອື່ນ.
- ຂອບຄຸນພຣະເຈົ້າທີ່ພຣະອົງຊົງບັນດານໃຫ້ພຣະເຢຊູຄືນມາຈາກຄວາມຕາຍ.
- ໃຫ້ເຮົາມີຊີວິດທີ່ສົມຄວນຢູ່ກັບການຄືນພຣະຊົນ.
- ຫວັງວ່າວັນນຶ່ງເຮົາຈະໄປຢູ່ກັບພຣະອົງທີ່ເມືອງຟ້າສວັນ.
- ບອກຄົນອື່ນເຣື່ອງຂ່າວປະເສີດການຄືນມາຈາກຕາຍ.

ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org.,by BV.